ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*******************************

ກະຊວງແຜນການ ແລະ ການລົງທຶນ — ເລກທີ 624 /ກລທ

ກົມສົ່ງເສີມການລົງທຶນ — ນະຄອນຫຼວງວຽງຈັນ, ວັນທີ 06 OCT 2011

# ແຈ້ງການ

ເຖິງ: - ບັນດາທ່ານນັກທຸລະກິດ, ນັກລົງທຶນພາຍໃນ ແລະ ຕ່າງປະເທດ

- ບັນດາທ່ານຜູ້ປະກອບການທຸລະກິດ ຢູ່ ສປປລາວ.

ເລື່ອງ: ການຍື່ນເອກະສານກ່ຽວກັບວຽກງານການລົງທຶນ

- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8/7/2011 ແລະ ອີງຕາມດຳລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 119/ນຍ, ລົງວັນທີ 20/4/2011.

ກົມສົ່ງເສີມການລົງທຶນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ນັບຕັ້ງແຕ່ວັນທີ 14/10/2011 ເປັນຕົ້ນໄປ ການຍື່ນເອກະສານກ່ຽວກັບວຽກງານການລົງທຶນ ໃຫ້ປະຕິບັດດັ່ງນີ້:

1. ເອກະສານຂໍລົງທຶນໃນກິດຈະການທົ່ວໄປ (ບໍ່ພົວພັນກັບການສຳປະທານຈາກລັດ) ແລະ ການສະເໜີຂໍປ່ຽນແປງພື້ນຖານນິຕິກຳຂອງວິສາຫະກິດທີ່ລົງທຶນໃນກິດຈະການທົ່ວໄປ ໃຫ້ໄປຍື່ນ ແລະ ພົວພັນໂດຍກົງນຳ ກະຊວງອຸດສາຫະກຳ ແລະ ການຄ້າ;
2. ເອກະສານຂໍນະໂຍບາຍຍົກເວັ້ນພາສີນຳເຂົ້າວັດຖຸດິບ, ອຸປະກອນ, ເຄື່ອງຈັກ, ອາໄຫຼ່ ແລະ ພາຫະນະຮັບໃຊ້ການຜະລິດທາງກົງ ໃຫ້ໄປຍື່ນ ແລະ ພົວພັນໂດຍກົງນຳ ກະຊວງການເງິນ (ກົມພາສີ);
3. ເອກະສານຂໍລົງທຶນໃນກິດຈະການສຳປະທານຈາກລັດ ແລະ ການສະເໜີຂໍປ່ຽນແປງພື້ນຖານນິຕິກຳຂອງວິສາຫະກິດທີ່ລົງທຶນໃນກິດຈະການສຳປະທານ ແມ່ນສາມາດຍື່ນ ແລະ ພົວພັນໂດຍກົງນຳຫ້ອງການບໍລິການການລົງທຶນປະຕູດຽວ ທີ່ຕັ້ງຢູ່ ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບຕາມທາງຄວນດ້ວຍ.

ຫົວໜ້າກົມ ກົມສົ່ງເສີມການລົງທຶນ

ທຸມເພັງ ສຸລາໄລ